**ປະທານປະເທດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ເຖິງ: ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ,
ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາຊົນຈີນ.

ທີ່ ນະຄອນຫຼວງປັກກິ່ງ.

ສະຫາຍ ທີ່ນັບຖື,

ເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດ ປະຊາຊົນຈີນ ຄົບຮອບ 74 ປີ, ໃນນາມຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ແລະ ຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າ ກໍ່ຄື ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນອັນອົບອຸ່ນ ແລະ ພອນໄຊອັນປະເສີດມາຍັງສະຫາຍ ແລະ ໂດຍຜ່ານສະຫາຍ ໄປຍັງ ຄະນະກຳມະການສູນກາງພັກກອມມູນິດຈີນ ແລະ ປະຊາຊົນຈີນອ້າຍນ້ອງທຸກຖ້ວນໜ້າ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ຕະຫຼອດໄລຍະ 7 ທົດສະຫວັດກວ່າທີ່ສາທາລະນະລັດ ປະຊາຊົນຈີນ ໄດ້ຮັບການສະຖາປະນາ, ປະຊາຊົນຈີນອ້າຍນ້ອງໄດ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ໄດ້ຮັບການພັດທະນາແບບກ້າວກະໂດດ ແລະ ກ້າວເຂົ້າສູ່ສັງຄົມສີວິໄລຢ່າງຮອບດ້ານ. ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະ ປະດິດສ້າງຂອງພັກກອມມູນິດຈີນ, ສປ ຈີນ ໄດ້ສ້າງປະຫວັດສາດໜ້າໃໝ່ແຫ່ງການພັດທະນາປະເທດຊາດ, ສາມາດຍາດໄດ້ຜົນສຳເລັດຮອບດ້ານ ແລະ ໜັກແໜ້ນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ທັນສະໄໝ, ເສດຖະກິດມີການຂະຫຍາຍຕົວຢ່າງວ່ອງໄວ ເຊິ່ງເປັນແຮງຍູ້ທີ່ສຳຄັນໃນການສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ. “ຂໍ້ລິເລີ່ມ ວ່າດ້ວຍ ອາລະຍະທຳທົ່ວໂລກ” ຂອງສະຫາຍເລຂາທິການໃຫຍ່ ສີ ຈິ້ນຜິງ ເປັນການປະກອບສ່ວນອັນສຳຄັນເຂົ້າໃນຂະບວນການຫັນເປັນທັນສະໄໝ ຂອງສັງຄົມມວນມະນຸດ ແລະ ຄວາມຈະເລີນຮຸ່ງເຮືອງທາງອາລະຍະທຳໃນທົ່ວໂລກ ແລະ ອັນນີ້ໄດ້ເຮັດໃຫ້ບົດບາດ ຂອງ ພັກ, ລັດ ສປ ຈີນ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດຢ່າງຮອບດ້ານ ແລະ ໃຫຍ່ຫຼວງຂອງປະຊາຊົນຈີນອ້າຍນ້ອງ ແລະ ຖືຜົນສຳເລັດດັ່ງກ່າວ ເປັນສິ່ງປຸກລະດົມກຳລັງໃຈໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວຂອງພວກຂ້າພະເຈົ້າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງຕົນ. ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງຈິງໃຈ ຕໍ່ການຊ່ວຍເຫລືອອັນລ້ຳຄ່າທີ່ສະຫາຍຈີນ ໄດ້ຕອບສະໜອງແກ່ ສປປ ລາວ ພວກຂ້າພະເຈົ້າຕະຫຼອດມາ, ພິເສດກໍ່ແມ່ນການຊ່ວຍເຫຼືອອັນສຳຄັນໃນການຂ້າມຜ່ານຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ ສປປ ລາວ ພວມປະເຊີນຢູ່ໃນປັດຈຸບັນ. ຂ້າພະເຂົ້າ ຂໍຖືໂອກາດນີ້ ຕາງໜ້າພັກ, ລັດຖະບານ ແລະ ປະຊາຊົນລາວ ອວຍພອນໄຊອັນປະເສີດມາຍັງສະຫາຍ ກໍ່ຄື ການນຳພັກ ແລະ ລັດຖະບານ ສປ ຈີນ ຕະຫຼອດຮອດປະຊາຊົນຈີນອ້າຍນ້ອງ ໂດຍພາຍໃຕ້ການນຳພາອັນຖືກຕ້ອງ, ເດັດດ່ຽວ, ໜັກແໜ້ນ ແລະ ສະຫຼາດສ່ອງໃສ ຂອງພັກກອມມູນິດຈີນ ອັນມີ ສະຫາຍ ສີ ຈິ້ນຜິງ ເປັນແກນກາງ ຈົ່ງປະສົບຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດພັດທະນາປະເທດຊາດ ຕາມເສັ້ນທາງສັງຄົມນິຍົມ ທີ່ທັນສະໄໝຕາມສີສັນພິເສດຂອງຈີນທີ່ວາງໄວ້, ສູ້ຊົນບັນລຸເປົ້າໝາຍ “100 ປີ ເຫດການທີສອງ” ກໍ່ຄື ຄວາມມຸ່ງຫວັງໃນການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດຈີນ.

ພັກ, ລັດຖະບານ ແລະ ປະຊາຊົນລາວ ຍຶດໝັ້ນ ແລະ ຖືສຳຄັນການພົວພັນຮ່ວມມືກັບພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ແລະ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າຕະຫຼອດໄລຍະຜ່ານມາ ສາຍພົວພັນທີ່ເປັນມູນເຊື້ອ ລະຫວ່າງ ລາວ-ຈີນ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກຳ ລາວ-ຈີນ, ຈີນ-ລາວ, ບັນດາໂຄງການຮ່ວມມືສຳຄັນທາງດ້ານຍຸດທະສາດ ລະຫວ່າງ ສອງປະເທດພວມໄດ້ຮັບການເສີມຂະຫຍາຍ ແລະ ຈັດຕັ້ງປະຕິບັດຢ່າງຕັ້ງໜ້າ. ຂ້າພະເຈົ້າ ຂໍຢືນຢັນຄືນນະໂຍບາຍອັນສະເໝີຕົ້ນສະເໝີປາຍຂອງ ສປປ ລາວ ໃນການສະໜັບສະໜູນນະໂຍບາຍຈີນດຽວ ແລະ ຄັດຄ້ານທຸກເຈດຈຳນົງທີ່ມຸ່ງຫວັງສ້າງ “ສອງປະເທດຈີນ” ຫລື “ໜຶ່ງຈີນ ໜຶ່ງໄຕ້ຫວັນ” ກໍ່ຄື ສະໜັບສະໜູນພາລະກິດການທ້ອນໂຮມປະເທດຊາດ ໂດຍສັນຕິວິທີຂອງ ສປ ຈີນ.

ຂ້າພະເຈົ້າຄອງຄອຍທີ່ຈະໄດ້ພົບປະກັບສະຫາຍ ໃນໂອກາດເດີນທາງເຂົ້າຮ່ວມກອງປະຊຸມສຸດຍອດ ໜຶ່ງແລວ ໜຶ່ງເສັ້ນທາງ ຄັ້ງທີ 3 ທີ່ ນະຄອນຫຼວງປັກກິ່ງ ແລະ ຮ່ວມລົງນາມໃນເອກະສານທີ່ສຳຄັນ ຂອງສອງຝ່າຍຄື ແຜນແມ່ບົດວ່າດ້ວຍການເປັນຄູ່ຮ່ວມຊະຕາກຳ ລາວ-ຈີນ, ຈີນ-ລາວ ສຳລັບໄລຍະປີ 2024-2028.

ຂໍອວຍພອນໃຫ້ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກຳ ລາວ-ຈີນ, ຈີນ-ລາວ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຈີນ ຈົ່ງໝັ້ນຄົງຂະໜົງແກ່ນ ແລະ ໄດ້ຮັບການເສີມຂະຫຍາຍ ໃຫ້ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ.

ຂໍອວຍພອນໃຫ້ສະຫາຍ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ອັນມີກຽດສະຫງ່າ ແລະ ສູງສົ່ງຂອງສະຫາຍ.

ດ້ວຍຄວາມນັບຖືຢ່າງສູງ,

ນະຄອນຫຼວງວຽງຈັນ, ວັນທີ 01 ກັນຍາ 2023

**ທອງລຸນ ສີສຸລິດ**

ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ

ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ